ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

໙໙໙*໓໓໓

ກະຊວງໂຍທາທິການແລະຂົນສົ່ງ

ຫ້ອງການ

ເລກທີ /ຍທຂ.ຫກ

ນະຄອນຫຼວງວຽງຈັນ, ວັນທີ

# ບົດສະເໜີ

## ການປັບປຸງແລະ ຍົກລະດັບ ບັນດາລັດວິສາຫະກິດ ອ້ອມຂ້າງ ກະຊວງ ຍທຂ ເພື່ອກະກຽມໃຫ້ແກ່ການເຊື່ອມໂຍງພາກພື້ນ ແລະ ສາກົນ.

ໃນເມື່ອກ່ອນ, ບັນດາວິສາຫະກິດໃນຂະແໜງໂຍທາທິການ ແລະ ຂົນສົ່ງ, ທີ່ພັກ ແລະ ລັດຖະບານຖືວ່າເປັນຂະແໜງປາຍແຫລມຂອງເສດຖະກິດແຫ່ງຊາດ ໄດ້ຮັບການສ້າງຕັ້ງຂຶ້ນຫລາຍສົມຄວນ ນັບທັງພາກລັດຄຸ້ມຄອງ ແລະ ພາກເອກະຊົນ, ໃນນັ້ນພາກລັດວິສາຫະກິດ ປະກອບມີ: ລັດວິສາຫະກິດ ກໍ່ສ້າງເລກ 1, ເລກ 8, ເລກ 10, ເລກ 13 ໃຕ້, ເລກ 20, ລັດວິສາຫະກິດກໍ່ສ້າງຄົມມະນາຄົມລັດວິສາຫະກິດ ຂົນສົ່ງທາງບົກ-ທາງນໍ້າລັດວິສາຫະກິດ ວິສະວະກຳຄົມມະນາຄົມ (ສະຖາບັນອອກແບບຄົມມະນາຄົມ), ລັດວິສາຫະກິດ ສຳຫລວດ-ອອກແບບ ແລະ ວິໄຈວັດສະດຸກໍ່ສ້າງ, ລັດວິສາຫະກິດ ການບິນລາວ, ລັດວິສາຫະກິດລົດເມນະຄອນຫລວງ ແລະ ອື່ນໆ, ຊຶ່ງການເຄື່ອນໄຫວທຸລະກິດໃນໄລຍະນັ້ນ ແມ່ນຂຶ້ນກັບການຄຸ້ມຄອງບໍລິຫານຂອງລັດ, ປະຕິບັດຕາມກົນໄກຄຸ້ມຄອງແບບລວມສູນອາດຍາສິດ, ບໍລິຫານເກື້ອກູນ, ການຜະລິດທຸລະກິດບໍ່ທັນຄິດໄລ່ເຖິງປະສິດທິຜົນເທົ່າທີ່ຄວນ.

ໂດຍປະຕິບັດຕາມແນວທາງປ່ຽນແປງໃໝ່ ບັນດາລັດວິສາຫະກິດຕ່າງໆ ກໍ່ໄດ້ຫັນຈາກກົນໄກ ລວມສູນບໍລິການເກື້ອກູນ ໄປສູ່ກົນໄກໄລ່ລຽງເສດຖະກິດ, ລວມໝູ່, ຮ່ວມທຶນກັບຕ່າງປະເທດ ແລະ ຫັນເປັນເອກະຊົນຈຳນວນນຶ່ງ, ຊຶ່ງທຸກໆພາກສ່ວນເສດຖະກິດທັງລັດວິສາຫະກິດ, ລວມໝູ່ ແລະ ເອກະຊົນລ້ວນແລ້ວແຕ່ມີສິດສະ
ເໝີພາບ ແລະ ເທົ່າທຽມກັນຕໍ່ໜ້າກົດໝາຍໄປຄຽງຄູ່ກັບ ການພົວພັນຮ່ວມມື ກັບສາກົນທີ່ເປີດກວ້າງ ບົນພື້ນຖານຕ່າງຝ່າຍ ຕ່າງມີຜົນປະໂຫຍດ.

ມາຮອດປະຈຸບັນ ບັນດາລັດວິສາຫະກິດ ກໍ່ໄດ້ມີການປັບປຸງ ແລະ ພັດທະນາ ການດຳເນີນທຸລະກິດຂອງຕົນເປັນກ້າວໆ ຈົນກາຍເປັນລັດວິສາຫະກິດທີ່ປະສົບຜົນສຳເລັດ, ໄດ້ມາດຕະຖານສາກົນ (ISO), ມີຜົນກຳໄລ ແລະ ໄດ້ປະກອບສ່ວນພັນທະເຂົ້າງົບປະມານຂອງລັດ ເປັນຈຳນວນຫລາຍເຊັ່ນ:

- ຂົງເຂດການກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ນໍ້າປະປາ:

  ປະຈຸບັນ, ໄດ້ມີບັນດາລັດວິສາຫະກິດກໍ່ສ້າງ ແລະ ທີ່ປຶກສາສຳຫລວດ-ອອກແບບ ທີ່ພົ້ນເດັ່ນ ແລະ ໄດ້ຮັບຄວາມເຊື່ອໝັ້ນຈາກລູກຄ້າທັງພາຍໃນ ແລະ ຕ່າງປະເທດເຊັ່ນ: ລັດວິສາຫະກິດ ວິສະວະກຳຄົມມະນາຄົມ (ລວຄ) ຊຶ່ງເປັນລັດວິສາຫະກິດທຳອິດຂອງ ກະຊວງ ທີ່ໄດ້ຮັບການຍັ້ງຢືນ ຈາກອົງກອນມາດຕະຖານລະຫວ່າງປະເທດ (ISO 9001:2000), ທີ່ຜ່ານມາບໍລິສັດດັ່ງກ່າວແລະ ບັນດາລັດວິສາຫະກິດກໍ່ສ້າງຂົວ-ທາງ ແລະ ສຳຫລວດອອກແບບ ອື່ນໆສາມາດສ້າງລາຍຮັບ,ທັງມີຜົນກຳໄລ ແລະ ໄດ້ມອບພັນທະເຂົ້າງົບປະມານ ຢ່າງເປັນປົກກະຕິ.

- ຂົງເຂດການບິນ:

  ລັດວິສາຫະກິດການບິນລາວ ກໍມີການເຕີບໃຫຍ່ຂະຫຍາຍຕົວ ຢ່າງຕໍ່ເນື່ອງ, ໂດຍໄດ້ພັດທະນາລະບົບການບໍລິການ, ການຂະຫຍາຍຕະຫລາດ ແລະ ເສັ້ນທາງບິນໃໝ່ ລວມທັງ ການເຊື່ອມຕໍ່ຖ້ຽວບິນເຂົ້າກັບບັນດາສາຍການບິນອື່ນໆ ໄດ້ຢ່າງລົງຕົວ. ນອກຈາກນັ້ນ, ພາກລັດຍັງໄດ້ສົ່ງເສີມ ລົງທຶນໃຫ້ຊື້ເຮືອບິນອາຍພົ່ນ ຊຸດທຳອິດມາຮັບໃຊ້ ເຂົ້າໃນການຂົນສົ່ງໂດຍສານ ຊຶ່ງເຮັດໃຫ້ ສປປ ລາວ ມີຄວາມເອກອ້າງ ແລະ ມີໃບໜ້າໃໝ່; ນອກນັ້ນ ກໍຍັງມີລັດວິສາຫະກິດ ລາວເດີນອາກາດ ທີ່ໃຫ້ບໍລິການໃນບັນດາແຂວງ ທີ່ເຄື່ອງບິນໃຫຍ່ບໍ່ສາມາດລົງໄດ້ເຊັ່ນ: ຊຳເໜືອ, ຜົ້ງສາລີ, ໄຊຍະບູລີ, ເຊໂປນ ແລະ ໃຫ້ບໍລິການຖ້ຽວບິນ ແບບເຊົ່າເໝົາລຳ, ຊຶ່ງໄດ້ສ້າງຄວາມສະດວກສະບາຍ ໃນການເດີນທາງໄປ-ມາ ຂອງທຸກຊັ້ນຄົນ ໃນສັງຄົມໄດ້ເປັນຢ່າງດີ.

- ຂົງເຂດຂົນສົ່ງທາງບົກ ແລະ ທາງນ້ຳ:

  ລັດວິສາຫະກິດ ຂົນສົ່ງທາງບົກ, ໂດຍສະເພາະແມ່ນສະມາຄົມຜູ້ຈັດສົ່ງສິນຄ້າລະຫວ່າງປະເທດ (LIFFA) ແລະ ລັດວິສາຫະກິດ ຂົນສົ່ງທາງນ້ຳ, ໃນໄລຍະຜ່ານມາ ເວົ້າລວມແມ່ນມີທ່ວງທ່າ ຂະຫຍາຍຕົວ.

ຄຽງຄູ່ກັບການສູ້ຊົນ ບຸກໜ້າບືນຕົວຂອງ ບັນດາລັດວິສາຫະກິດແລ້ວ, ກະຊວງ ຍທຂ ກໍຍັງໄດ້ສ້າງບັນດາແຜນຍຸດທະສາດ ເພື່ອເປັນບ່ອນອີງໃຫ້ແກ່ ການເຄື່ອນໄຫວດຳເນີນທຸລະກິດ ແລະ ກໍເພື່ອຮອງຮັບໃຫ້ແກ່ ການພັດທະນາຂະແໜງການຕົນ ໃນແຕ່ລະຂົງເຂດວຽກງານເຊັ່ນ: 1. ແຜນພັດທະນາການເຊື່ອມຕໍ່ດ້ານທາງຫລວງ ໄລຍະປີ 2011-2020; 2. ແຜນຍຸດທະສາດການພັດທະນາຕົວເມືອງ ແລະ ແຜນຍຸດທະສາດການພັດທະນາ ນະຄອນຫລວງວຽງຈັນ ຮອດປີ 2030; 3. ແຜນພັດທະນາລະບົບວິທະຍຸການບິນ ແລະ ຄຸ້ມຄອງການຈະລາຈອນທາງອາກາດຮູບແບບໃໝ່; 4. ແຜນຍຸດທະສາດ ແລະ ແຜນດຳເນີນງານວຽກງານຄວາມປອດໄພທາງຖະໜົນ ແຫ່ງທົດສະວັດ2011-2020; 5. ແຜນຍຸດທະສາດວຽກງານໂຍທາທິການ ທາງນ້ຳ 2011-2020; 6. ແຜນຍຸດທະສາດລວມການຂົນສົ່ງທາງບົກ.

ນອກນັ້ນ ກໍຍັງໄດ້ປັບປຸງ ແລະ ສ້າງໃໝ່ ບັນດາກົດໝາຍຈຳນວນ **7** ສະບັບ, ພ້ອມທັງອອກຂໍ້ກຳນົດ ແລະ ກົດລະບຽບຕ່າງໆ ນັບທັງໄດ້ເຜີຍແຜ່ໃຫ້ທຸກພາກສ່ວນທຸລະກິດ ຮັບຮູ້, ເຂົ້າໃຈ, ແນໃສ່ເພື່ອ ຄຸ້ມຄອງ, ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ການຜະລິດ-ທຸລະກິດໃນທົ່ວສັງຄົມ; ນອກຈາກການປັບປຸງ ແລະ ສ້າງໃໝ່ບັນດາກົດໝາຍດັ່ງກ່າວແລ້ວ ຂະແໜງພວກເຮົາຍັງເປັນເຈົ້າການໃນການສ້າງສັນຍາ ແລະ ອະນຸສັນຍາກັບ ບັນດາປະເທດອ້ອມຂ້າງ, ພາກພື້ນ ແລະ ສາກົນແນໃສ່ ຫລຸດຜ່ອນ ແລະ ລົບລ້າງອຸປະສັກສິ່ງກີດຂວາງຕ່າງໆ, ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການດຳເນີນທຸລະກິດຂອງທຸກພາກສ່ວນເສດຖະກິດ; ນອກຈາກນັ້ນ ຍັງໄດ້ຊຸກຍູ້ສົ່ງເສີມ ໃຫ້ບັນດາວິສາຫະກິດຈັດຕັ້ງເປັນສະມາຄົມເຊັ່ນ: ສະມາຄົມສະຖາປານິກ ແລະ ວິສະວະກອນກໍ່ສ້າງ, ສະມາຄົມຂົນສົ່ງໂດຍສານ, ສະມາຄົມຂົນສົ່ງສິນຄ້າ, ສະມາຄົມທຸລະກິດກໍ່ສ້າງ.

ຈາກເຫດຜົນຂ້າງເທິງ ໄດ້ສ້າງເງື່ອນໄຂໃຫ້ບັນດາລັດວິສາຫະກິດພາຍໃນຂອງພວກເຮົາ ສາມາດເຂົ້າຮ່ວມການປະມູນສາກົນ ແລະ ປະຕິບັດໂຄງການສາກົນ ຈຳນວນຫຼາຍໂຄງການດ້ວຍຜົນສຳເລັດ ແລະ ມີຄຸນນະພາບດີ.

ໂດຍປະຕິບັດຕາມມະຕິຂອງກອງປະຊຸມໃຫຍ່ ຂອງພັກປະຊາຊົນປະຕິວັດລາວ ຄັ້ງທີ VIIເປັນຕົ້ນມາໃນການຫັນ ສປປ ລາວໃຫ້ເປັນປະເທດບໍລິການທາງຜ່ານ ດ້ານຄົມມະນາຄົມ-ຂົນສົ່ງ ຂອງອະນຸພາກພື້ນນັ້ນ, ປະຈຸບັນ ລະບົບພື້ນຖານໂຄງລ່າງດ້ານຄົມມະນາຄົມ ຂົນສົ່ງທີ່ໃຊ້ເປັນທາງຜ່ານ ສຳລັບບັນດາປະເທດໃນອະນຸພາກພື້ນ (ແລວເສດຖະກິດຕາເວັນອອກ-ຕາເວັນຕົກ ແລະ ເໜືອ-ໃຕ້) ນັບທັງເສັ້ນທາງເຊື່ອມຕໍ່ພາຍໃນ ແລະ ຮັບໃຊ້ວຽກພັດທະນາຊົນນະບົດ ກໍ່ໄດ້ຮັບການປັບປຸງຍົກລະດັບ ແລະ ພັດທະນາຢ່າງຕໍ່ເນື່ອງເຊັ່ນ: ຄວາມຍາວຂອງເສັ້ນທາງຈາກ 20.000 ກມ ໃນປີ 1997 ມາເປັນ 43.601 ກມ ໃນປີ 2013. ນອກຈາກນັ້ນ, ບັນດາສະໜາມບິນທັງພາຍໃນ ແລະ ສາກົນ, ບັນດາທ່າເຮືອ-ຄອງເດີນເຮືອ ແລະ ທາງລົດໄຟ ກໍ່ໄດ້ຮັບການປັບປຸງຍົກລະດັບ ໃຫ້ທັນສະໄໝ ແລະ ໄດ້ມາດຕະຖານສາກົນ ເທື່ອລະກ້າວ; ບັນດາຕົວເມືອງໃຫຍ່, ເທດສະບານຂອງບັນດາແຂວງ , ເມືອງຈຳນວນຫລາຍ ແລະ ບ້ານໃຫຍ່ໃນຊົນນະບົດຈຳນວນນຶ່ງ ກໍໄດ້ຮັບການພັດທະນາຮອບດ້ານ, ມີຜັງເມືອງ, ມີນ້ຳປະປາ ທີ່ເປັນໃບໜ້າໃໝ່ເປັນກ້າວໆມາ.

ຄຽງຄູ່ກັບຜົນສໍາເລັດໃນການຄຸ້ມຄອງ ແລະ ການດໍາເນີນການຜະລິດທຸລະກິດ ໃນໄລຍະຜ່ານມາ ຂອງບັນດາລັດວິສາຫະກິດທີ່ກ່າວຂ້າງເທິງນັ້ນ ກໍຍັງມີຈຸດອ່ອນ ແລະ ຂໍ້ຄົງຄ້າງທີ່ຈະຕ້ອງໄດ້ພ້ອມກັນປັບປຸງ ແກ້ໄຂ ແລະ ຖອດຖອນເປັນບົດຮຽນດັ່ງລຸ່ມນີ້ຄື:

- ການບໍລິການລັດ ຍັງຊັກຊ້າ, ດ້ານນິຕິກໍາ ແລະ ກົນໄກຍັງບໍ່ທັນຄົບຊຸດ; ຍັງບໍ່ທັນມີນະໂຍບາຍ ແລະ ມາດຕະການທີ່ເໝາະສົມ ເພື່ອສ້າງ ແລະ ເສີມຂະຫຍາຍກໍາລັງແຮງ ຂອງທຸກພາກສ່ວນເສດຖະກິດພາຍໃນ ເຂົ້າໃນການຂຸດຄົ້ນທ່າແຮງ ແລະ ຄວາມອາດສາມາດທີ່ບົ່ມຊ້ອນຂອງປະເທດເຮົາ ຕາມທິດທັນເປັນອຸດສະຫະກໍາ ແລະ ທັນສະໄໝ ກໍ່ຄືການເຊື່ອມໂຍງເສດຖະກິດກັບສາກົນ.
- ບັນດາຫົວໜ່ວຍວິສາຫະກິດ ເວົ້າລວມແມ່ນຍັງອ່ອນນ້ອຍ, ປະສິດຕິຜົນຍັງບໍ່ສູງເທົ່າທີ່ຄວນ, ຄວາມສາມາດແຂ່ງຂັນ ໃນເງື່ອນໄຂແຫ່ງການເສື່ອມໂຍງ ຍັງບໍ່ທັນສູງ; ຕະຫຼອດເຖິງ ການເຂົ້າຫາແຫຼ່ງທຶນກໍພົບຄວາມຫຍຸ້ງຍາກ ເພາະບໍ່ສາມາດເອົາຫຼັກຊັບຂອງຕົນ ໄປຄໍ້າປະກັນການກູ້ເງິນຈາກທະນາຄານໄດ້.
- ບາງລັດວິສາຫະກິດ ທີ່ເຄື່ອນໄຫວໃນໄລຍະຜ່ານມາ ຈົນຮອດປະຈຸບັນ ກໍຍັງບໍ່ທັນມີສະພາບໍລິຫານ; ບາງລັດວິສາຫະກິດກໍຄຸ້ມຄອງ ແລະ ບໍລິຫານງົບປະມານ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ.

ເພື່ອບັນລຸບັນດາຄາດໝາຍສູ້ຊົນ ທີ່ກອງປະຊຸມໃຫຍ່ຄັ້ງທີ III ຂອງອົງຄະນະພັກກະຊວງ ຍທຂ ໄດ້ວາງໄວ້ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ໃຫ້ເກີດດອກອອກຜົນ, ດ້ານນຶ່ງ ໃນທ້າຍປີ 2015 ທີ່ຈະມາເຖິງນີ້ ສປປ ລາວ ພວກເຮົາກໍຈະໄດ້ເຂົ້າເປັນ ສະມາຊິກປະຊາຄົມເສດຖະກິດອາຊຽນ, ສະນັ້ນ ການເຊື່ອມໂຍງສາກົນ ແລະ ການເຊື່ອມຈອດພາກພື້ນດ້ານໂຍທາທິການ ແລະ ຂົນສົ່ງ ຈຶ່ງມີຄວາມຈໍາເປັນ ແລະ ສໍາຄັນ; ດັ່ງນັ້ນ ໃນຊຸມປີຕໍ່ໜ້າ ຂະແໜງໂຍທາທິການ ແລະ ຂົນສົ່ງຈະໄດ້ສືບຕໍ່ ນໍາໃຊ້ຈຸດພິເສດດ້ານທີ່ຕັ້ງຂອງປະເທດເຮົາ ທີ່ຕິດແປະກັບຫຼາຍປະເທດນັ້ນ ໃຫ້ເກີດຜົນປະໂຫຍດສູງສຸດ ໂດຍເລັ່ງໃສ່ຂະຫຍາຍ ແລະ ພັດທະນາລະບົບ ຄົມມະນາຄົມໃຫ້ເປັນປາຍແຫລມທີ່ ໂລ່ງລ່ຽນ, ສະດວກ, ປອດໄພ, ທັນສະໄໝ, ໂປ່ງໃສ ເພື່ອປະຕິບັດສອງໜ້າທີ່ຍຸດທະສາດ ແລະ ເຊື່ອມຕໍ່ກັບອະນຸພາກພື້ນ. ໃນນັ້ນ ຈະສືບຕໍ່ພັດທະນາພື້ນຖານໂຄງລ່າງ ຕາມທິດທັນອອກສູ່ທະເລຕາເວັນອອກຢ່າງແຂງແຮງ, ເຮັດໃຫ້ລະບົບຄົມມະນາຄົມ-ຂົນສົ່ງ ມີຄວາມສະດວກ, ວ່ອງໄວ, ທັນສະໄໝ ແລະ ທະລຸໄປ ສູ່ເຂດຈຸດສຸມຕ່າງໆດ້ວຍມາດຕະຖານທີ່ດີຂຶ້ນ ເພື່ອບຸກທະລຸເຊື່ອມຕໍ່ກັບອະນຸພາກພື້ນຢ່າງໜັກແໜ້ນ ແລະ ຍູ້ການພັດທະນາເສດຖະກິດ-ສັງຄົມ, ຕິດພັນກັບການຊຸກຍູ້ ແລະສົ່ງເສີມທຸກພາກສ່ວນທຸລະກິດທັງພາກລັດ ແລະ ເອກະຊົນ ເພື່ອຮ່ວມກັນປະກອບສ່ວນເຂົ້າໃນການລົບລ້າງຄວາມທຸກຍາກ ແລະ ບັນລຸເປົ້າໝາຍສະຫັດສະວັດແຫ່ງການພັດທະນາ.

ເພື່ອເຮັດໃຫ້ທິດທາງລວມດັ່ງກ່າວຂອງຂະແໜງການ ປະກົດເປັນຮູບປະທໍາ, ບົນພື້ນຖານການຕີລາຄາໝາກຜົນດັ່ງກ່າວ, ຜ່ານມາສາມາດຖອດຖອນບົດຮຽນແນໃສ່ ເພື່ອສ້າງເປັນທິດທາງໃຫ້ພາກລັດເຮົາ ໄດ້ພິຈາລະນາ ແລະ ມີນະໂຍບາຍອັນເໝາະສົມ ເພື່ອປັບປຸງບັນດາວິສາຫະກິດພາຍໃນໃຫ້ເຂັ້ມແຂງ, ໂດຍສະເພາະແມ່ນບັນດາລັດວິສາຫະກິດ ເພື່ອໃຫ້ສາມາດເປັນເຈົ້ານໍາໜ້າພາທາງໃນຂົງເຂດທີ່ລັດ ເຫັນວ່າມີຄວາມເໝາະສົມທີ່ຈະຕ້ອງລົງທຶນ ເປັນບູລິມະສິດຂອງຕົນ ເຊັ່ນ:

- ❖ ກ່ອນໝົດຈະຕ້ອງເພີ່ມທະວີບົດບາດ ແລະ ຄວາມສາມາດຄຸ້ມຄອງຂອງລັດ ຕໍ່ລັດວິສາຫະກິດ, ໂດຍລັດຈະຕ້ອງຮີບຮ້ອນສ້າງ ແລະ ປັບປຸງກົດໝາຍ, ບັນດານິຕິກໍາຕ່າງໆ, ອອກນະໂຍບາຍ, ປັບປຸງແກ້ໄຂລະບອບ ລະບຽບການ ແລະ ກົນໄກຄຸ້ມຄອງວິສາຫະກິດຂອງລັດ ໃຫ້ເປັນລະບົບຄົບຊຸດ.
- ❖ ປັບປຸງສະພາບໍລິຫານ, ຄຽງຄູ່ກັບການປັບປຸງແບບວິທີນໍາພາ ແລະ ການເຄື່ອນໄຫວຂອງພັກ ຕະຫຼອດເຖິງຂອງອົງການຈັດຕັ້ງມະຫາຊົນ ພາຍໃນລັດວິສາຫະກິດ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ.
- ❖ ການເຂົ້າເຖິງແຫລ່ງທຶນ:
    - ພາກລັດພວກເຮົາຕ້ອງມີນະໂຍບາຍໃນການເຂົ້າເຖິງແຫລ່ງທຶນຕ່າງໆທັງພາຍໃນ ແລະຕ່າງປະເທດໄດ້ຢ່າງສະດວກ, ວ່ອງໄວ ພາຍໃຕ້ເງື່ອນໄຂສົ່ງເສີມທີ່ສົມເຫດສົມຜົນ ດ້ວຍເງິນກູ້ດອກເບ້ຍຕໍ່າ ໂດຍເອົາໂຄງການທີ່ໄດ້ເຊັນສັນຍາແລ້ວນັ້ນເປັນສິ່ງຄໍ້າປະກັນ.
    - ສະເໜີຮີບຮ້ອນແກ້ໄຂໜີ້ສິນທີ່ຍັງຄຸມເຄືອລະຫວ່າງພາກລັດບໍລິຫານ ແລະ ບັນດາລັດວິສາຫະກິດ.

- ການມອບສິດຂາດຕົວ, ສິດເປັນເຈົ້າກຳມະສິດຊັບສິນທີ່ລັດລົງທຶນ ໃຫ້ແກ່ລັດວິສາຫະກິດເພື່ອເປັນຫລັກຊັບຄ້ຳປະກັນເງິນກູ້.

❖ ການພັດທະນາດ້ານພື້ນຖານໂຄງລ່າງ:

- ບັນດາພື້ນຖານໂຄງລ່າງ ໂດຍສະເພາະເສັ້ນທາງທີ່ສາມາດຮັບນ້ຳໜັກໄດ້ 11 ໂຕນ/ເພົາ ມີພຽງເສັ້ນທາງເລກ 9 ແລະທາງ R3 ເທົ່ານັ້ນ, ນອກນັ້ນຮັບນ້ຳໜັກໄດ້ພຽງ 9,1 ໂຕນ/ເພົາ,ຊຶ່ງຍັງຕ່ຳກວ່າມາດຕະຖານຂອງບັນດາປະເທດເພື່ອນບ້ານ. ສະນັ້ນອັນທ້າທາຍຂອງຂະແໜງ ຍທຂ ແມ່ນຕ້ອງສູ້ຊົນປັບປຸງຍົກລະດັບມາດຕະຖານບັນດາເສັ້ນທາງເຫລົ່ານັ້ນຂຶ້ນໃຫ້ເທົ່າທຽມກັບມາດຕະຖານຂອງອາຊຽນ, ໄປຄຽງຄູ່ກັບການສ້າງສິ່ງອຳນວຍຄວາມສະດວກ ດ້ານການຂົນສົ່ງ ເພື່ອຜູ້ການຜະລິດ-ທຸລະກິດ ຢູ່ພາຍໃນພວກເຮົາ ຢູ່ຕາມເຂດ ລຽບຕາມບັນດາແລວທາງ ແລະ ເສັ້ນທາງເຫລົ່ານັ້ນ ເປັນຕົ້ນ ສ້າງສາງເກັບມ້ຽນ ແລະ ສູນຄຸ່ມຖ່າຍສິນຄ້າ, ລະບົບພາລາທິການຂົນສົ່ງ (ໂລຈິສຕິກ) ຢູ່ນະຄອນຫລວງ, ພາກເໜືອ, ພາກກາງ ແລະ ພາກໃຕ້.

❖ ການພັດທະນາຂົງເຂດການບິນ:

- ພວກເຮົາຕ້ອງມີນະໂຍບາຍສົ່ງເສີມໃຫ້ພະນັກງານ-ລັດຖະກອນ ທີ່ເດີນທາງໄປເຄື່ອນໄຫວວຽກງານລັດຖະການຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ນຳໃຊ້ບໍລິການບັນດາລັດວິສາຫະກິດການບິນພາຍໃນຂອງພວກເຮົາ.
- ສະເໜີຄົ້ນຄວ້າມີນະໂຍບາຍຫລຸດຜ່ອນອັດຕາຄ່າບໍລິການສະໜາມບິນ ແລະຄ່າບິນຜ່ານຂອງບັນດາລັດວິສາຫະກິດການບິນ ທີ່ເປີດເສັ້ນບິນໃໝ່ ໂດຍຫລຸດຄ່າບໍລິການ 50% ເປັນເວລາ 2 ປີຫລຸດ 25% ເປັນເວລາ 3 ປີ, ຫລັງຈາກນັ້ນຈຶ່ງເກັບເຕັມ 100%ເພື່ອສ້າງແຮງຈູງໃຈໃນການດຳເນີນທຸລະກິດ ແລະສົ່ງເສີມສາຍການບິນ.
- ການປົກປ້ອງສາຍການບິນແຫ່ງຊາດ ຈະໄປຄຽງຄູ່ກັບການບຸກໜ້າບືນຕົວຂອງສາຍການດັ່ງກ່າວ ໃຫ້ສາມາດເປັນຄູ່ຮ່ວມທຸລະກິດໃນພາກພື້ນໄດ້.

❖ ການສະຫງວນບາງຂົງເຂດທຸລະກິດ ໄວ້ໃຫ້ຄົນລາວ:

- ສະເໜີສະຫງວນຕະຫລາດການຂົນສົ່ງພາຍໃນ ທີ່ນອນໃນບັນດາໂຄງການໃຫຍ່ໆຂອງລັດຖະບານ ໃຫ້ເປັນບູລິມະສິດຂອງບັນດາຫົວໜ່ວຍທຸລະກິດພາຍໃນປະເທດ ເປັນຕົ້ນ: ການຂົນສົ່ງໃນໂຄງການກໍ່ສ້າງເຂື່ອນໄຟຟ້າຂະໜາດໃຫຍ່, ການຂົນສົ່ງແຮ່ທາດ ແລະ ໂຄງການໃຫຍ່ອື່ນໆ.

❖ ການພັດທະນາບຸກຄະລາກອນ:

- ແນໃສ່ໃຫ້ກຽມພ້ອມເຂົ້າເປັນປະຊາຄົມເສດຖະກິດອາຊຽນໃນປີ 2015 ແລະ ໃຫ້ບັນດາວິສາຫະກິດພາຍໃນ ກໍ່ຄືລັດວິສາຫະກິດຂອງພວກເຮົາ ໄດ້ຮັບຜົນປະໂຫຍດສູງສຸດນັ້ນ, ເຫັນວ່າຕ້ອງບຸກບືນສ້າງບຸກຄະລາກອນ, ນາຍຊ່າງຕ່າງໆຂອງພວກເຮົາໃຫ້ມີຄວາມສາມາດດ້ານຝີມືແຮງງານ, ຊຳນານງານ ແລະ ມີຄຸນນະພາບ, ລະບຽບວິໄນຂຶ້ນ ແລະ ທັງດ້ານປະລິມານ.

**ເວົ້າລວມແລ້ວ** ພວກເຮົາ ຕ້ອງຕັດສິນໃຈບຸກທະລຸຕື່ມອີກ ດ້ານຈິນຕະນາການ ດ້ວຍການສ້າງຍຸດທະສາດກ່ຽວກັບການພັດທະນາວິສາຫະກິດຂອງລັດ ແລະ ມີທິດທາງອັນຈະແຈ້ງໃນການປັບປຸງ ແລະຍົກສູງປະສິດທິຜົນຂອງລັດວິສາຫະກິດ.

ທ້າຍສຸດນີ້, ຂ້າພະເຈົ້າຂໍອວຍພອນໃຫ້ກອງປະຊຸມ ຍທຂ ທົ່ວປະເທດ ຈົ່ງປະສົບຜົນສຳເລັດດ້ວຍໝາກຜົນອັນຈົບງາມ.

**ຂໍຂອບໃຈ.**